ADB

ASIAN DEVELOPMENT BANK
6 ADB Avenue, Mandaluyong City
1550 Metro Manila, Philippines
Tel + 63 2 632 4444
Fax + 63 2 636 4444

www.adb.org

**NEWS RELEASE**

# ອາຊີຈະຕ້ອງຈັດບຸລິມະສິດຄວາມພ້ອມໃນການຮັບມືກັບໄພພິບັດໃນການປະເຊີນກັບຄວາມສ່ຽງທີ່ເພີ່ມຂຶ້ນ - ບົດຄົ້ນຄ້ວາຂອງ ADB

**ຮົງກົງ, ຈີນ (3 ເມສາ 2019) —** ອີງຕາມບົດຄົ້ນຄ້ວາໃໝ່ ຊຶ່ງເປັນສ່ວນໜຶ່ງຂອງບົດລາຍງານດ້ານເສດຖະກິດຂອງ ADB ທີ່ມີຊື່ວ່າ *ການຄາດຄະເນການພັດທະນາຂອງອາຊີປີ 2019*, ໃນສະພາບທີ່ພາກພື້ນກໍາລັງປະເຊີນກັບຄວາມສ່ຽງທາງໄພພິບັດທີ່ສູງຂຶ້ນກວ່າເກົ່າ ບັນດາປະເທດທີ່ກໍາລັງພັດທະນາໃນອາຊີ ຈໍາເປັນຢ່າງຮີບດ່ວນເພື່ອສ້າງຄວາມພ້ອມຮັບມືຂອງຕົນກ່ອນທີ່ໄພພິບັດຈະເຂົ້າເກີດຂຶ້ນ ໂດຍໃຫ້ມີການວາງແຜນທີ່ດີກ່ວາເກົ່າ, ການຈັດສັນງົບປະມານຂອງລັດຖະບານ ແລະ ການປຸກລະດົມໃຫ້ເຮັດປະ ກັນໄພ.

ທ່ານ ຢະສຸຢຸກິ ສາວະດະ, ຫົວໜ້ານັກເສດຖະສາດຂອງ ADB ໄດ້ກ່າວວ່າ "ທຸກໆສີ່ໃນຫ້າຄົນ ທີ່ໄດ້ຮັບຜົນກະທົບອັນຕະລາຍຈາກທໍາມະຊາດແມ່ນນອນຢູ່ໃນແຖບອາຊີ" ທ່ານກ່າວຕື່ມອີກວ່າ "ໃນຫຼາຍປີຜ່ານນີ້, ທະວີບອາຊີໄດ້ນໍາໜ້າພາທາງໃນຄວາມພະຍາຍາມຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ, ແຕ່ກໍ່ຍັງໄດ້ຮຽກຮ້ອງໃຫ້ມີການປະຕິບັດງານເພີ່ມຂຶ້ນເພື່ອຮັບມືກັບພາວະສ່ຽງສູງ ແລະ ພ້ອມທັງການຕອບໂຕ້ໃນລະດັບຊາດແລະໃນລະດັບຊຸມຊົນ."

ຄົວເຮືອນທີ່ທຸກຍາກແລະຖືກປະລະ, ທຸລະກິດຂະໜາດນ້ອຍ, ແລະ ປະເທດທີ່ມີຂະໜາດນ້ອຍແລະຢູ່ຫ່າງໄກສອກຫຼີກເຊັ່ນ: ບັນດາປະເທດທີ່ເປັນເກາະໃນປາຊີຟິກ ໄດ້ຮັບໄພຄຸກຄາມສ່ວນໃຫຍ່ຈາກເຫດການໄພພິບັດຕ່າງໆ. ແລະນັບຕັ້ງແຕ່ປີ 1980 ເປັນຕົ້ນມາ, ເຖິງແມ່ນວ່າສະພາບການປ່ຽນແປງດິນຟ້າອາກາດ ໄດ້ເພີ່ມຄວາມອັນຕະລາຍຈາກທໍາມະຊາດ ແລະ ການຂະຫຍາຍຕົວຂອງຕົວເມືອງຢ່າງວ່ອງໄວຈະເພີ່ມໂອກາດປະເຊີນກັບອັນຕະລາຍ, ມີປະມານພຽງແຕ່ **8%** ຂອງການສູນເສຍຈາກໄພພິບັດ ທີ່ໄດ້ຮັບການຄຸ້ມຄອງຈາກການປະກັນໄພ.

ບົດລາຍງານໄດ້ຮຽກຮ້ອງເຖິງບັນດາປະເທດຕ່າງໆ ໃຫ້ສືບຕໍ່ເພີ່ມຄວາມເອົາໃສ່ໃນການວາງແຜນ ເພື່ອຮັບມືກັບຄວາມສ່ຽງຈາກໄພພິບັດ. ພື້ນຖານໂຄງລ່າງທີ່ເປັນມິດກັບສະພາບອາກາດ ແລະ ສາມາດຕ້ານທານກັບໄພພິບັດ ໂດຍສະເພາະແມ່ນພື້ນຖານໂຄງລ່າງທີ່ມີມູນຄ່າຄຸ້ມຕໍ່ລາຄາໃນການຫຼຸດຜ່ອນການສູນເສຍຕ່າງໆ ທີ່ຕິດພັນກັບເຫດການໄພພິບັດໃນອານາຄົດ. ໃນນີ້ລວມທັງການຈັດການຊັບພະຍາກອນນໍ້າທີ່ດີກ່ວາເກົ່າ ເພື່ອແກ້ໄຂໄພແຫ້ງແລ້ງ, ຕຶກທີ່ຢູ່ອາໄສຂອງຊຸມຊົນທີ່ທົນທານຕໍ່ແຜ່ນດິນໄຫວ ແລະ ການຟື້ນຟູປ່າຕາມແຄມທະເລ ເພື່ອຫຼຸດຜ່ອນການເຊາະເຈື່ອນຂອງຝັ່ງທະເລ.

ພາກພື້ນຍັງຈະໄດ້ຮັບຜົນປະໂຫຍດ ຖ້າລັດຖະບານຂອງບັນດາປະເທດຕ່າງໆ ຫາກຈັດສັນງົບປະມານສະເພາະເປັນປະຈໍາ ເພື່ອໝູນໃຊ້ເຂົ້າໃນກໍລະນີເກີດໄພພິບັດ ພ້ອມທັງເພີ່ມການນໍາໃຊ້ສິນເຊື່ອ ແລະ ການປະກັນໄພ

**Media Inquiries**

Karen Lane
Tel: (632) 632 6138
Mob: (63) 920 938 6487
Email: klane@adb.org

**Connect with us on social media:**

AsianDevBank
@ADB_HQ
@ADB_HQ
Asian-Development-Bank

ໂດຍສະເພາະແມ່ນຜ່ານທາງຜະລິດຕະພັນການໂອນຖ່າຍຄວາມສ່ຽງ ແລະ ການເຮັດປະກັນໄພຄືນ ເພື່ອກຽມເພື່ອໄວ້ຮັບມືກັບຄວາມສ່ຽງທີ່ຂະຫຍາຍເປັນວົງກ້ວາງ. ຄວາມພະຍາຍາມໃນຂັ້ນລະດັບຊາດຄວນຈະໄດ້ຮັບການຜັນຂະຫຍາຍໂດຍການປະຕິບັດໃນຂັ້ນຊຸມຊົນ ນັບຕັ້ງແຕ່ການລົງທຶນເຂົ້າໃນການບໍລິຫານຈັດການກັບສິ່ງເສດເຫຼືອຂັ້ນຊຸມຊົນກໍ່ໃຫ້ສາມາດສ້າງຄວາມພ້ອມຮັບມື, ໃນຂະນະດຽວກັນ ກໍ່ຖືເອົາຊຸມຊົນເປັນຈຸດເລີ່ມຕົ້ນທຳອິດໃນການຮຽກຮ້ອງໃຫ້ມີການສະໜັບສະໜູນ ພ້ອມທັງພູມປັນຍາທ້ອງຖິ່ນພາຍຫຼັງທີ່ເກີດມີໄພພິບັດ.

ບົດລາຍງານຍັງໃຫ້ຮູ້ວ່າ ການຟື້ນຟູຢ່າງຮີບດ່ວນມັກເກີດຂຶ້ນພາຍຫຼັງການເກີດເຫດໄພພິບັດ, ແຕ່ວ່າການຟື້ນຟູຢ່າງທັນດ່ວນ ຄວນຈະໄດ້ຮັບການພິຈາລະນາໄປພ້ອມກັນກັບຈຸດປະສົງອື່ນໆ ລວມທັງການສ້າງຄວາມເຂັ້ມແຂງໃນຄວາມພ້ອມຮັບມືກັບໄພອັນຕະລາຍໃນອານາຄົດ, ການພິຈາລະນາເຖິງຄວາມຕ້ອງ ການຂອງກຸ່ມຄົນທີ່ມີຄວາມສ່ຽງໃນສັງຄົມ ແລະ ການຟື້ນຟູສະພາບເສດຖະກິດ ແລະ ຄວາມໝັ້ນຄົງຫຼາກຫຼາຍທາງສັງຄົມຂອງເຂດທີ່ໄດ້ຮັບຜົນກະທົບໃຫ້ກັບຄືນສູ່ສະພາບເດີມ. ຫົວໃຈຫຼັກຕໍ່ກັບວິທີການດັ່ງກ່າວ ແມ່ນການປະສານສົມທົບຮ່ວມກັນລະຫວ່າງ ລັດຖະບານຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ, ບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ຊຸມຊົນໃນການຮັບມືກັບໄພພິບັດ ທີ່ໄດ້ໃຫ້ເຫັນມາແລ້ວເຊັ່ນ: ເຫດການແຜ່ນດິນໄຫວໃນເນປານ ແລະ ເຫດພາຍຸໄຊໂຄນແພມທີ່ວານູອາຕູ ຊຶ່ງທັງສອງເຫດການນີ້ແມ່ນເກີດຂຶ້ນໃນປີ 2015.

ADB ແມ່ນມຸ່ງໝັ້ນເພື່ອບັນລຸໃຫ້ພາກພື້ນອາຊີປາຊີຟິກມີຄວາມຈະເລີນຮຸ່ງເຮືອງ ທົ່ວເຖິງ ພ້ອມຮັບມືກັບສະພາບ ແລະ ມີຄວາມຍືນຍົງ ພ້ອມທັງຮັກສາຄວາມພະຍາຍາມຂອງຕົນເພື່ອການລົບລ້າງຄວາມທຸກຍາກ. ໃນປີ 2018, ADB ໄດ້ປະຕິບັດຕາມຄຳໝັ້ນສັນຍາໃນການສະໜອງເງິນກູ້ແລະທຶນຊ່ວຍເຫຼືອລ້າມູນຄ່າທັງໝົດ 21,6 ຕື້ໂດລາສະຫະລັດ. ສ້າງຕັ້ງຂຶ້ນໃນປີ 1966, ADB ມີ 68 ປະເທດສະມາຊິກເປັນເຈົ້າຂອງ ໃນນັ້ນມີ 49 ປະເທດທີ່ມາຈາກພາກພື້ນດັ່ງກ່າວ.